ຮອດ 2020 ເຊກອງຈະມີ ຊົນລະປະທານເພີ່ມອີກ 13 ແຫ່ງ
Friday, 05 April 2013 04:29
ແຂວງເຊກອງ ເປັນແຂວງນ້ອຍສຸດທີ່ນອນໃນ 4 ແຂວງພາກໃຕ້ ຂອງ ສປປ ລາວ,
ທົ່ວແຂວງມີເນື້ອທີ່ ທັງຫມົດ 7.665 ຕາຕະລາງກິໂລແມັດ, ໃນນັ້ນ
ເນື້ອທີ່ເຂດພູດອຍກວມເອົາ 65% ເຂດພູພຽງກວມ 30% ເຂດທົ່ງພຽງກວມ 5%
ມີແມ່ນ້ຳໄຫລຜ່ານ ຫລາຍສາຍເຊັ່ນ: ນ້ຳເຊກອງ, ເຊໂດນ, ເຊຂະຫນານ, ເຊນ້ຳນ້ອຍ,
ຫ້ວຍລຳພັນ ແລະ ຫ້ວຍອື່ນໆ ເຊິ່ງມີເງື່ອນໄຂໃນການ
ສ້າງເຂື່ອນໄຟຟ້ານ້ຳຕົກຂະຫນາດນ້ອຍ, ຂະຫນາດກາງ ແລະ ຂະຫນາດໃຫຍ່.
 
ທ່ານ ທອງຄຳ ມະນີວົງ ຫົວຫນ້າ ພະແນກກະສິກຳ-ປ່າໄມ້
ແຂວງເຊກອງລາຍງານໃຫ້ຮູ້ວ່າ:
 
ແຂວງເຊກອງ ມີບັນຊີໂຄງການຊົນລະປະທານ ທີ່ໄດ້ເອກະພາບສັງລວມ
ເຂົ້າເປັນແຜນຍຸດທະສາດໃນການພັດທະນາ ພາຍໃນແຂວງເຊກອງ
ເພື່ອຮັບໃຊ້ໃນໄລຍະສັ້ນ, ໄລຍະຍາວແຕ່ປີ 2013 ຫາ 2020 ແລະ
ຈັດລຽງບຸລິມະສິດ ຂອງແຕ່ລະໂຄງການຄື: ໂຄງການທີ່ໄດ້ສຶກສາ ແລະ
ສຳຫລວດ-ອອກແບບສຳເລັດແລ້ວ ແລະ ສະເຫນີກໍ່ສ້າງໃນປີ 2014 ມີ 3 ໂຄງການ,
ລວມມູນຄ່າການກໍ່ສ້າງທັງຫມົດ 104,96 ຕື້ກີບ; ໃນນັ້ນ:
ໂຄງການຄູກັນນ້ຳຫ້ວຍເພົາເມືອງທ່າແຕງ, ລວມມູນຄ່າ ການກໍ່ສ້າງ 29,160
ຕື້ກີບ; ໂຄງການຝາຍນ້ຳລົ້ນຫ້ວຍນວນເມືອງລະມາມ, ລວມມູນຄ່າ 15,6 ຕື້ ກີບ,
ໂຄງການຝາຍນ້ຳລົ້ນຫ້ວຍວີ (ທົ່ງນາບ້ານປາກໂທນ) ເມືອງ ລະມາມ, ລວມມູນຄ່າ
60,2 ຕື້ ກີບ, ໂຄງການທີ່ຈະຕ້ອງໄດ້ສຶກສາ ແລະ ສຳຫລວດ-ອອກແບບມີ 10 ໂຄງການ,
ລວມມູນຄ່າການກໍ່ສ້າງທັງຫມົດ 741,76 ຕື້ກີບຄື:
ໂຄງການອ່າງເກັບນ້ຳຫ້ວຍກະຢ່ອງເມືອງລະມາມ, ລວມມູນຄ່າ 23,8 ຕື້ກີບ,
ໂຄງການເອົານ້ຳ ທ້າຍເຂືອນຫ້ວຍລຳພັນ 2, ເມືອງ ລະມາມ, ລວມມູນຄ່າ 36,2 ຕື້ ກີບ,
ໂຄງການອ່າງເກັບນ້ຳຫ້ວຍ ຢືດ ເມືອງລະມາມ (ເອົານ້ຳເຂົ້າ ຊ່ວຍຫ້ວຍລຳພັນ 2)
ລວມມູນຄ່າ 53,36 ຕື້ກີບ, ໂຄງການອ່າງເກັບນ້ຳຫ້ວຍປື ເມືອງລະມາມ,
ລວມມູນຄ່າ 343,1 ຕື້ກີບ, ໂຄງການ ອ່າງເກັບນ້ຳຫ້ວຍວີ (ບ້ານຕິ້ວ) ເມືອງລະມາມ,
ລວມມູນຄ່າ 58,7 ຕື້ກີບ, ໂຄງການອ່າງເກັບ ນ້ຳຫ້ວຍວີ1, ເມືອງລະມາມ
(ເອົານ້ຳຊ່ວຍຫ້ວຍວີປາກໂທນ), ລວມມູນຄ່າ 25 ຕື້ກີບ, ໂຄງການ
ອ່າງເກັບນ້ຳຫ້ວຍວີ 2, ເມືອງລະມາມ (ເອົານ້ຳຊ່ວຍຫ້ວຍວີປາກ ໂທນ), ລວມມູນຄ່າ
25 ຕື້ກີບ, ໂຄງການອ່າງເກັບນ້ຳຫ້ວຍຊາຍເມືອງທ່າແຕງ, ລວມມູນຄ່າ 48,6
ຕື້ກີບ, ໂຄງການຝາຍນ້ຳລົ້ນຫ້ວຍລີເຈືອງເມືອງທ່າແຕງ, ລວມມູນຄ່າ 81,6
ຕື້ກີບ, ໂຄງການຝາຍນ້ຳລົ້ນຫ້ວຍລາມ່ວງເມືອງທ່າແຕງ (ເອົານ້ຳຊ່ວຍ
 1 / 2

ຮອດ 2020 ເຊກອງຈະມີ ຊົນລະປະທານເພີ່ມອີກ 13 ແຫ່ງ
Friday, 05 April 2013 04:29
ຫ້ວຍເພົາ), ລວມມູນຄ່າ 46,4 ຕື້ກີບ.
 
ທ່ານຫົວຫນ້າພະແນກກະສິ ກຳ-ປ່າໄມ້ແຂວງເຊກອງຍັງລາຍງານຕື່ມວ່າ:
ເພື່ອສູ້ຊົນປະກອບສ່ວນໃຫ້ຕົວເລກຄາດຫມາຍການຜະລິດເຂົ້າຂອງ
ລັດຖະບານບັນລຸເປົ້າ,
ສູ້ຊົນປະຕິບັດຕົວເລກແບ່ງເປັນຂອງກະຊວງກະສິກຳ-ປ່າໄມ້ ແລະ
ຈັດຕັ້ງປະຕິບັດຕົວເລກການຜະລິດໃຫ້ໄດ້ຕາມແຜນຍຸດທະ
ສາດຂອງພະແນກກະສິກຳ-ປ່າໄມ້ແຂວງວາງໄວ້ບັນລຸຕາມຄາດຫມາຍຈຳເປັນ
ຕ້ອງໄດ້ພັດທະນາດ້ານວຽກງານຊົນລະປະທານ ເພື່ອຂະຫຍາຍເນື້ອທີ່ຮັບນ້ຳ
ແລະ ຮັກສາເນື້ອທີ່ໆມີແລ້ວໃຫ້ເກີດປະ ໂຫຍດສູງສຸດ ແລະ
ຮັບປະກັນຕໍ່ກັບສະພາບແວດລ້ອມ, ຊັບພະຍາກອນອາກາດ ແລະ
ແຫລ່ງນ້ຳທີ່ມີການປ່ຽນແປງ (ນ້ຳບົກແຫ້ງ ຫລຸດຫນ້ອຍຖອຍລົງຂອງແຕ່ລະ ປີ)
ທັງເປັນການຮັບປະກັນເຂດຈັດສັນຍົກຍ້າຍ,
ທີ່ຕັ້ງພູມລຳເນົາຈັດສັນອາຊີບຄົງທີ່, ແກ້ໄຂຄວາມທຸກຍາກ
ເພື່ອຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ນັບມື້ດີຂຶ້ນ.
 
 
ທີ່ມາຂອງຂ່າວ:
 2 / 2